## ຂ້ອຍສາມາດຊອກຫາຂໍ້ມູນກ່ຽວກັບວິທີຄຸມກຳເນີດໄດ້ຢູ່ໃສ?

ເຈົ້າສາມາດໄປສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມນະຄອນຫຼວງເພື່ອຂໍຂໍ້ມູນ ແລະ ປຶກສາກ່ຽວກັບການຄຸມກຳເນີດ ຫຼື ບໍ່ດັ່ງນັ້ນເຈົ້າຍັງສາມາດໂທເຂົ້າສາຍດ່ວນ ເພື່ອຊ່ວຍໃຫ້ເຈົ້າຕັດສິນໃຈເລືອກວິທີຄຸມກຳເນີດໄດ້ຢ່າງຖືກຕ້ອງ ແລະ ປອດໄພ.
ເຈົ້າບໍ່ຕ້ອງຢ້ານທີ່ຈະໃຊ້ບໍລິການໃຫ້ຄຳປຶກສາເລື່ອງສຸຂະພາບ ເຂົາເຈົ້າເປັນກັນເອງ,

ໝາຍຄວາມວ່າ:

- ເພິ່ນປິດລັບ ແລະ ເຈົ້າສາມາດປຶກສາກັບທ່ານໝໍກ່ຽວກັບວິທີຄຸມກຳເນີດດ້ວຍຕົວທ່ານເອງ.
- ມີທ່ານໝໍ ແລະ ແພດທັງຍິງ ແລະ ຊາຍທີ່ເຈົ້າສາມາດປຶກສາໄດ້ ເພິ່ນບໍລິການແບບປິດລັບ ເປັນກັນເອງ ແລະ ໃຫ້ກຽດ.
- ສະຖານທີ່ເຂົ້າຫາກໍ່ສະດວກ ແລະ ຊອກຫາງ່າຍ
- ເຈົ້າສາມາດໄປເວລາໃດກໍ່ໄດ້ທີ່ເຈົ້າຕ້ອງການ
- ມີວິທີຄຸມກຳເນີດຫຼາຍແບບທີ່ປອດໄພ ແລະ ລາຄາບໍ່ແພງ
- ມີບໍລິການປ້ອງກັນ ແລະ ຮັກສາປິ່ນປົວພະຍາດບໍ່ເສຍຄ່າ
- ການບໍລິການໃຫ້ກັບແມ່ຍິງ ແລະ ຜູ້ຊາຍແມ່ນສະເໝີພາບກັນ ແລະ ເຈົ້າຍັງສາມາດພາແຟນເຈົ້າໄປນຳກັນໄດ້ອີກ.
- ບັນຍາກາດເປັນກັນເອງ ແລະ ປອດໄພ







ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສຸຂະພາບທາງເພດ
ແລະ ຄວາມສຳພັນ, ເຈົ້າສາມາດ ເຂົ້າໄປສອບຖາມຢູ່
Dr Facebook ຕາມທີ່ຢູ່: **www.facebook.com/vwyfans.**
ສຳລັບຂໍ້ມູນລາຍລະອຽດ ແລະ ການບໍລິການເຈົ້າສາມາດເຂົ້າໄປສອບຖາມ ແລະ
ຂໍຄຳປຶກສາໄດ້ທີ່ ສູນສຸຂະພາບພັດທະນາແມ່ຍິງ ແລະ ໄວໜຸ່ມ
ຖະໜົນສຸພານຸວົງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ
(ສີ່ແຍກໄຟແດງປາກປາສັກ/ໂຮງຮຽນມັດທະຍົມສີໂຄດ)
ຫຼື ໄປສະຖານທີ່ບໍລິການດ້ານສຸຂະພາບອື່ນ
ຫຼື ໂທສາຍດ່ວນ: 1361 (ສຳລັບຜູ້ຍິງ)
ແລະ 137 (ສຳລັບຜູ້ຊາຍ)
ເພື່ອຂໍຂໍ້ມູນ ແລະ ຄຳປຶກສາ.

# ປ້ອງກັນ ການຖືພາ ແລະ ມີເພດສຳພັນທີ່ປອດໄພ ສຳລັບໄວໜຸ່ມ

!!! ເລືອກ ແລະ ຕັດສິນໃຈ ດ້ວຍຕົວເຈົ້າເອງ!!!



UNFPA

## 2

## ເປັນຫຍັງຂ້ອຍຈຶ່ງຕ້ອງຮູ້ກ່ຽວກັບການວາງແຜນຄອບຄົວ?

- ຍ້ອນວ່າການມີເພດສຳພັນເປັນເລື່ອງທຳມະຊາດ ເຊິ່ງແຕ່ລະຄົນມີສິດທິໃນການມີເພດສຳພັນ
- ຍ້ອນວ່າໄວໜຸ່ມລາວຜູ້ທີ່ແຕ່ງງານ ແລະ ບໍ່ແຕ່ງງານລ້ວນແຕ່ມີເພດສຳພັນ
- ຍ້ອນວ່າໄວໜຸ່ມລາວຢູ່ເຂດຊົນນະບົດ ແລະ ຕົວເມືອງກໍ່ມີເພດສຳພັນ
- ຍ້ອນວ່າຖ້າເຈົ້າຕ້ອງການມີເພດສຳພັນໃນຕອນນີ້ ຫຼື ໃນອະນາຄົດ, ເຈົ້າຕ້ອງຮູ້ວິທີປ້ອງກັນຕົວເຈົ້າເອງ ແລະ ແຟນຂອງເຈົ້າ ເພື່ອຄວາມປອດໄພ ແລະ ສຸຂະພາບດີ
- ຍ້ອນວ່າເຈົ້າມີສິດທິໃນການຮຽນຮູ້ວິທີປ້ອງກັນການຖືພາແບບບໍ່ຕັ້ງໃຈ ແລະ ພະຍາດຕິດຕໍ່ທາງເພດສຳພັນ
- ຍ້ອນວ່າເຈົ້າຕ້ອງຮູ້ກ່ຽວກັບຜົນທີ່ຕາມມາຖ້າເຈົ້າບໍ່ໃຊ້ວິທີວາງແຜນຄອບຄົວ



## 3

## ການວາງແຜນຄອບຄົວໝາຍເຖິງຫຍັງ?

ມັນບໍ່ໄດ້ໝາຍເຖິງການກີດກັນວ່າບໍ່ໃຫ້ມີລູກ ແຕ່ມັນເປັນທາງເລືອກຂອງເຈົ້າໃນການຕັດສິນໃຈວ່າເມື່ອໃດເຈົ້າຈະເອົາລູກ, ເອົາຈັກຄົນ, ແລະ ຄວາມຖີ່ ຖ້າເຈົ້າໃຊ້ວິທີວາງແຜນຄອບຄົວໃນຕອນນີ້ ກໍ່ບໍ່ໄດ້ໝາຍຄວາມວ່າເຈົ້າຈະບໍ່ສາມາດມີລູກອີກ ເຈົ້າຕ້ອງຮູ້ກ່ຽວກັບສິດທິສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ລວມທັງການວາງແຜນຄອບຄົວ ເພື່ອຫຼີກເວັ້ນການຖືພາ ທີ່ບໍ່ຕັ້ງໃຈ ແລະ ພະຍາດຕິດຕໍ່ທາງເພດສຳພັນ ແລະຕັດສິນໃຈດ້ວຍຕົວເຈົ້າເອງ.

### ຖ້າຂ້ອຍ ແລະ ແຟນຂອງຂ້ອຍ ຢາກມີເພດສຳພັນຮ່ວມກັນຂ້ອຍ ຕ້ອງປ້ອງກັນແນວໃດ?

ຖ້າວ່າເຈົ້າ ແລະ ແຟນຂອງເຈົ້າຕົກລົງຢາກມີເພດສຳພັນນຳກັນ ແລ້ວບໍ່ຢາກຖືພາ ຫຼື ຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ ເຈົ້າທັງສອງຕ້ອງປ້ອງກັນ. ສະນັ້ນ, ພວກເຈົ້າທັງສອງ ຄວນຕ້ອງຮູ້ຂໍ້ມູນ ແລະ ຄຳແນະນຳ ກ່ຽວກັບການມີເພດສຳພັນທີ່ປອດໄພຈາກທ່ານໝໍ ຫຼື ແພດ ເຊິ່ງພວກເຮົາມີບໍລິການຢູ່ທີ່ສູນຮັກສາສຸຂະພາບໄວໜຸ່ມ ໂດຍບໍ່ເສຍຄ່າ.

### ຖ້າຂ້ອຍຍັງບໍ່ຢາກ ມີເພດສຳພັນເທື່ອ ຕ້ອງເຮັດແນວໃດ?

ໄວໜຸ່ມສ່ວນຫຼາຍມັກຖືກກົດດັນໃນເວລາທີ່ໝູ່ເພື່ອນຂອງເຂົາເຈົ້າມີເພດສຳພັນກັບແຟນ. ແຕ່ມັນເປັນເລື່ອງປົກກະຕິທີ່ເຈົ້າຍັງບໍ່ທັນພ້ອມທີ່ຈະມີເພດສຳພັນ ແລະ ຄວນປະຕິເສດມັນ ສະ! ໃຊ້ເວລາເຮັດໃນສິ່ງທີ່ເຈົ້າຢາກເຮັດ ແລະ ຄວນຮູ້ໄວ້ວ່າເຮົາສາມາດມີແຟນເມື່ອໃດກໍ່ໄດ້ ໃນເມື່ອເຮົາພ້ອມ, ການເປັນແຟນກັນບໍ່ໄດ້ໝາຍຄວາມວ່າຕ້ອງມີເພດສຳພັນກັນ.

## 4

## ແລ້ວກ່ຽວກັບຢາຄຸມກຳເນີດ ກັບຄວາມຮັບຜິດຊອບເດ້?

ທຸກໆຄົນ ບໍ່ວ່າຍິງ ຫຼື ຊາຍ ອາຍຸຊໍ່າໃດກໍ່ຕາມ ລ້ວນແຕ່ມີສິດທິໃນການຊອກຫາຄຳປຶກສາ ກ່ຽວກັບວິທີຄຸມກຳເນີດ.




ມັນບໍ່ແມ່ນພຽງແຕ່ຄວາມຮັບຜິດຊອບຂອງແມ່ຍິງເທົ່ານັ້ນ.

ແຕ່ຜູ້ຊາຍກໍ່ຕ້ອງມີຄວາມຮັບຜິດຊອບເຊັ່ນດຽວກັນ ແລະ ຕົກລົງໃຊ້ຖົງຢາງອະນາໄມບໍ່ວ່າຈະເປັນຖົງຢາງອະນາໄມຂອງຜູ້ຍິງ ຫຼື ຂອງຜູ້ຊາຍ.







ແມ່ຍິງ ແລະ ຜູ້ຊາຍແມ່ນມີຄວາມຮັບຜິດຊອບຫຼາຍເທົ່າກັນ. ສະນັ້ນ, ການໃຊ້ຖົງຢາງອະນາໄມເວລາມີເພດສຳພັນ, ບໍ່ຕ້ອງລໍຖ້າໃຫ້ແຟນຂອງເຈົ້າບອກ ແລະ ບໍ່ຕ້ອງຄິດວ່າແຟນຂອງເຈົ້າ ຈະໄປນອນນຳຄົນອື່ນ ຫຼື ບໍ່ເຊື່ອໃຈເຈົ້າ ຖ້າລາວມີຖົງຢາງອະນາໄມຕິດໂຕ, ແຕ່ທີ່ຈິງແລ້ວຍ້ອນວ່າເຂົາເຈົ້າຢາກປົກປ້ອງເຈົ້າ.

5

## ວິທີຄຸມກຳເນີດແບບໃດທີ່ມີຢູ່ປະເທດລາວ?
## ວິທີຄຸມກຳເນີດທັງໝົດໃນຕາຕະລາງນີ້ແມ່ນມີສະໜອງຢູ່ປະເທດລາວ ແລະ ມີຄວາມປອດໄພຕໍ່ໄວໜຸ່ມ

| ວິທີຄຸມກຳເນີດ | ຖົງຢາງອະນາໄມຜູ້ຊາຍ  | ຖົງຢາງອະນາໄມຜູ້ຍິງ  | ຝັງເຂັມຄຸມກຳເນີດ  | ສັກຢາຄຸມກຳເນີດ  | ຫ່ວງອະນາໄມ  | ຢາເມັດ Progestogen-only (POP)  | ການເຮັດໝັນຍິງ/ຊາຍ  |
|---|---|---|---|---|---|---|---|
| ມີຜົນດີຄືແນວໃດ? | 98% ໄດ້ຜົນດີຖ້າໃສ່ຢ່າງຖືກຕ້ອງ. ແມ່ຍິງ 2 ໃນ 100 ຄົນຖືພາໃນໜຶ່ງປີ.<br><br>ມີຈຳໜ່າຍຕາມຄຣີນິກ ແລະ ຮ້ານຂາຍຢາ/ຮ້ານຄ້າທົ່ວໄປ ລາຄາປະຢັດ<br><br>ສະດວກສະບາຍສຳລັບມີເພດສຳພັນບາງຄັ້ງຄາວ<br><br>ຫ້າມໃຊ້ຜະລິດຕະພັນທີ່ປະສົມນ້ຳມັນເຊັ່ນ ນ້ຳມັນຊຸ່ມຊື່ນ ຫຼື ຄີມທາໂຕໃສ່ຖົງຢາງອະນາໄມ ເພາະມັນຈະສາມາດເຮັດໃຫ້ຫຼຸດໄດ້<br><br>ມີທຸກຂະໜາດ, ທຸກແບບ ແລະ ກິ່ນ | 95% ໄດ້ຜົນດີຖ້າໃຊ້ຖືກວິທີຕາມຄຳແນະນຳ. ແມ່ຍິງ 5 ໃນ 100 ຄົນຖືພາໃນໜຶ່ງປີ.<br><br>ສາມາດໃສ່ໄດ້ທຸກເວລາກ່ອນມີເພດສຳພັນ.<br><br>ສະດວກສະບາຍສຳລັບມີເພດສຳພັນບາງຄັ້ງຄາວ<br><br>ສາມາດໃຊ້ກັບຜະລິດຕະພັນທີ່ປະສົມນ້ຳມັນ. | ຫຼາຍກວ່າ 99% ໄດ້ຜົນດີ. > ແມ່ຍິງ 1 ໃນ 1000 ຄົນຖືພາ ໃນ 3 ປີ.<br><br>ໃຊ້ໄດ້ເຖິງ 3 ປີ ແຕ່ສາມາດຖອດອອກກ່ອນໄດ້<br><br>ບໍ່ຈຳເປັນຕ້ອງໃຊ້ຄຸມກຳເນີດອື່ນໃນເວລາທີ່ຝັງເຂັມຢູ່<br><br>ເມື່ອຖອດເຂັມອອກ ກໍ່ສາມາດຖືພາໄດ້ປົກກະຕິ | ຫຼາຍກວ່າ 99% ໄດ້ຜົນດີ. > ແມ່ຍິງ 4 ໃນ 1000 ຄົນຖືພາໃນ 2 ປີ.<br><br>ບໍ່ຈຳເປັນຕ້ອງໃຊ້ວິທີຄຸມກຳເນີດອື່ນໃນຊ່ວງເວລາສັກຢາ.<br><br>ສາມາດໃຊ້ໄດ້ໃນຊ່ວງເວລາໃຫ້ນົມລູກ. | ຫຼາຍກວ່າ 99% ໄດ້ຜົນດີ. > ແມ່ຍິງ 2 ໃນ 100 ຄົນຖືພາໃນ 5 ປີ.<br>ສາມາດກຸ້ມໄດ້ເຖິງ 5-10 ປີ ຂຶ້ນກັບແຕ່ລະແບບ ແລະ ສາມາດເອົາອອກໄດ້ທຸກເວລາ<br><br>ໄດ້ຜົນສະເໝີເວລາທີ່ໃສ່ຢູ່.<br><br>ເຈົ້າບໍ່ຈຳເປັນຕ້ອງໃຊ້ວິທີຄຸມກຳເນີດອື່ນໃນເວລາທີ່ໃສ່ຮວງຢູ່<br><br>ເມື່ອຖອດຮ່ວງອອກ ເຈົ້າກໍ່ສາມາດຖືພາໄດ້ປົກກະຕິ | ຫຼາຍກວ່າ 99% ໄດ້ຜົນດີ ຖ້ານຳໃຊ້ຢ່າງຖືກຕ້ອງຕາມຄຳແນະນຳ. > ແມ່ຍິງ 1 ໃນ 100 ຄົນຖືພາໃນ 1 ປີ.<br><br>ມີປະໂຫຍດຕໍ່ແມ່ຍິງທີ່ບໍ່ສາມາດໃຊ້ຮໍໂມນຍິງ ຫຼື ຢາເມັດປະສົມ<br><br>ແມ່ຍິງທີ່ມີອາຍຸ 25ປີຂຶ້ນໄປສາມາດໃຊ້ໄດ້<br><br>ສາມາດໃຊ້ໄດ້ໃນຊ່ວງເວລາໃຫ້ນົມລູກ. | ວິທີຄຸມກຳເນີດບໍ່ໃຫ້ຖືພາອີກວິທີໜຶ່ງແບບຖາວອນຄືການເຮັດໝັນຍິງ ແລະ ໝັນຊາຍ. ແຕ່ໄວໜຸ່ມບໍ່ໃຊ້ວິທີນີ້ເນື່ອງຈາກເຂົາເຈົ້າຍັງຕ້ອງການຖືພາ ຫຼື ສະລໍການຖືພາ ແລະ ຍັງຢາກຖືພາໃນຕໍ່ໜ້າ. |
| ປະເພດຂອງແຕ່ລະວິທີ | ວິທີປ້ອງກັນ. | ວິທີປ້ອງກັນ. | ວິທີປ້ອງກັນແບບໄລຍະຍາວ ແຕ່ເອົາອອກໄດ້ຖ້າຕ້ອງການມີລູກ. | ວິທີແບບຍາວນານ. | ວິທີປ້ອງກັນແບບໄລຍະຍາວ ແຕ່ເອົາອອກໄດ້ຖ້າຕ້ອງການມີລູກ. | ວິທີປ້ອງກັນແບບໄລຍະສັ້ນໂດຍໃຊ້ຮໍໂມນ. | ວິທີແບບຖາວອນ. |
| ສາມາດ ປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ | ໄດ້ | ໄດ້ | ບໍ່ໄດ້ | ບໍ່ໄດ້ | ບໍ່ໄດ້ | ບໍ່ໄດ້ | ບໍ່ໄດ້ |



## ການຄຸມກຳເນີດໃນເວລາສຸກເສີນ:

ກໍລະນີເຈົ້າມີເພດສຳພັນທີ່ບໍ່ໄດ້ໃຊ້ຖົງຢາງອານາໄມ ຫຼື ໃຊ້ແລ້ວເກີດຖົງຢາງອະນາໄມຈີກຂາດ, ແມ່ນຕ້ອງໄດ້ບອກແຟນຂອງເຈົ້າ!ເຈົ້າສາມາດໄປເອົາຢາຄຸມກຳເນີດສຸກເສີນໄດ້ຢູ່ສູນຮັກສາສຸຂະພາບໄວໜຸ່ມ ເພື່ອປ້ອງກັນບໍ່ໃຫ້ຖືພາ, ແຕ່ມັນບໍ່ສາມາດປ້ອງກັນການຕິດພະຍາດທາງເພດສຳພັນໄດ້!



ຢາຄຸມກຳເນີດສຸກເສີນນີ້ຈະໄດ້ຜົນ ຖ້າກິນພາຍໃນ 3 ມື້ ຫຼັງຈາກມີເພດສຳພັນ. ສະນັ້ນຕ້ອງຮີບດ່ວນໄປຫາໝໍ ເພື່ອເອົາຢາຄຸມກຳເນີດສຸກເສີນ.

6

ແຕ່ລະວິທີຂອງການຄຸມກຳເນີດໃນຕາຕະລາງໜ້ານີ້ ທຸກວິທີບໍ່ສາມາດປ້ອງກັນພະຍາດຕິດຕໍ່ທາງເພດສຳພັນໄດ້ ຍົກເວັ້ນການໃສ່ຖົງຢາງອະນາໄມ.

ສະນັ້ນ, ເພື່ອຄວາມປອດໄພ ຕ້ອງໃຊ້ຖົງຢາງອະນາໄມທຸກຄັ້ງ. ເຈົ້າສາມາດເລືອກໃຊ້ຖົງຢາງອະນາໄມຍິງ ຫຼື ຊາຍກໍ່ໄດ້ເວລາມີເພດສຳພັນ. ວິທີຮັບຮູ້ການຄຸມກຳເນີດ, ການຖອດອອກ ແລະ ນ້ຳຢາຂ້າອະສຸຈິ ແມ່ນມີຄວາມສ່ຽງທີ່ຈະເຮັດໃຫ້ມີລູກໄດ້!

ແຜ່ນພັບນີ້ແມ່ນສຳລັບໃຫ້ຂໍ້ມູນທົ່ວໄປກ່ຽວກັບວິທີຄຸມກຳເນີດ. ຖ້າເຈົ້າມີຄຳຖາມ ຫຼື ຂໍ້ຂ້ອງໃຈ ໃຫ້ໄປຖາມທ່ານໝໍ, ຫຼື ໄປສູນຮັກສາສຸຂະພາບແມ່ຍິງ ແລະ ໄວໜຸ່ມນະຄອນຫຼວງ/ສະຖານທີ່ບໍລິການດ້ານ ສຸຂະພາບ ຫຼື ໂທສາຍດ່ວນເພື່ອສອບຖາມ ແລະ ປຶກສາ.

## 7 ຫ້າມມີເພດສໍາພັນເດັດຂາດ ເມື່ອເຈົ້າບໍ່ພ້ອມ ຫຼື ຖືກບັງຄັບ

ເມື່ອແຟນເຈົ້າເວົ້າວ່າ:




## 8 ຄວາມສ່ຽງຂອງການມີເພດສໍາພັນມີຫຍັງແດ່?

ຄວາມສ່ຽງຂອງການມີເພດສໍາພັນເກີດມາຈາກການບໍ່ໃຊ້ຖົງຢາງອານາໄມ ເພື່ອຄຸມກໍາເນີດ ແລະ ມີເພດສໍາພັນກັບຫຼາຍຄົນ. ການດື່ມ ຫຼື ເສບຂອງມຶນເມົາ ເຊັ່ນ ເຫຼົ້າ, ເບຍ ແລະ ຢາເສບຕິດທຸກຢ່າງ ສາມາດເຮັດໃຫ້ເຈົ້າມີເພດສໍາພັນທີ່ບໍ່ປອດໄພ.

### ຜົນຂອງການມີເພດສໍາພັນທີ່ບໍ່ປອດໄພ

## 9 ຄວາມເຊື່ອ ແລະ ຄວາມເຂົ້າໃຈທີ່ຜິດ ກ່ຽວກັບການຄຸມກໍາເນີດ

*"ຖົງຢາງອະນາໄມເຮັດໃຫ້ການມີ ເພດສໍາພັນບໍ່ດີ"*

ໃນປະຈຸບັນຖົງຢາງອະນາໄມມີຫຼາຍຮູບ

*"ການມີລູກໝາຍເຖິງຄວາມປອດໄພສໍາລັບ ຄອບຄົວຂອງຂ້ອຍໃນອານາຄົດ"*

ເຈົ້າຄວນຄິດໃຫ້ດີກ່ຽວກັບການເປັນພໍ່ແມ່ ຍ້ອນວ່າ ຖ້າກາຍເປັນພໍ່ແມ່ແລ້ວ ເຈົ້າຕ້ອງມີຄວາມຮັບຜິດ ຊອບຫຼາຍຂຶ້ນ. ເຈົ້າສາມາດກາຍເປັນພໍ່ແມ່ໄດ້ທຸກ


预览已结束，完整报告链接和二维码如下：

https://www.yunbaogao.cn/report/index/report?reportId=5_19741